ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມ ຄຕຟງ ເນັ້ນການກະກຽມ ຄວາມພ້ອມວຽກງານການປະເມີນຮອບດ້ານຂອງລາວ





ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນຄັ້ງທີ II ປະຈຳປີ 2020 ໄດ້ຈັດຂຶ້ນໃນວັນທີ 28 ກໍລະກົດ 2020 ທີ່ ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ຊຶ່ງໄດ້ເນັ້ນໃຫ້ເຫັນຄວາມຄືບໜ້າການກະກຽມຄວາມພ້ອມວຽກງານການປະເມີນຮອບດ້ານຂອງ ສປປ ລາວ ໃນປີ 2020-2021 ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຕຟງ. ພ້ອມນີ້, ກໍ່ມີທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ຮອງປະທານ ຄຕຟງ; ກອງເລຂາ ແລະ ບັນດາພະນັກງານຂັ້ນນຳຈາກກະຊວງ-ອົງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຍັງໄດ້ປຶກສາຫາລືຫຼາຍບັນຫາທີ່ມີຄວາມສຳຄັນຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຂອງ ສປປ ລາວ ໂດຍສະເພາະຄວາມຄືບໜ້າການກະກຽມຄວາມພ້ອມວຽກງານການປະເມີນຮອບດ້ານຂອງ ສປປ ລາວ ໃນປີ 2020-2021 ທີ່ມີ 4 ແຜນວຽກບູລິມະສິດຂອງ 4 ພາກສ່ວນ ໃນນີ້ແມ່ນວຽກງານເຜີຍແຜ່ແລະເຊື່ອມຊຶມ; ວຽກງານນິຕິກຳ ແລະ ກົນໄກ; ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີແນໃສ່ເພື່ອຮັບປະກັນການປະເມີນດ້ານນິຕິກຳ, ກົນໄກ ແລະ ປະສິດທິຜົນ ຊຶ່ງຂະບວນການປະເມີນ ນອກຈາກດ້ານເອກະສານທີ່ໄດ້ສົ່ງໃຫ້ທີມປະເມີນ ສປປ ລາວ ສະບັບທຳອິດກ່ຽວກັບດ້ານນິຕິກຳແຕ່ເດືອນມີນາ 2020 ແລະ ຈະມີການປະເມີນຕົວຈິງຜ່ານທາງວີດີໂອໃນເດືອນສິງຫາ 2020 ເພື່ອຊີ້ແຈງດ້ານນິຕິກຳ, ທີ່ປະຊຸມຍັງໄດ້ປຶກສາຫາລື ແລະ ຮັບຮອງບາງແຜນວຽກ ໂດຍສ້າງຂະບວນການໃນການເຜີຍແຜ່ເຊື່ອມຊຶມວຽກງານ AML/CFT, ລົງເລິກການຝຶກອົບຮົມດ້ານເຕັກນິກການສືບສວນ-ສອບສວນໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ດຳເນີນການຈັດຕັ້ງປະຕິບັດການຫຼຸດຜ່ອນຄວາມສ່ຽງ ໂດຍສະເພາະຂະແໜງການທີ່ມີຄວາມສ່ຽງ ແລະ ຮັບປະກັນວຽກງານຮ່ວມມືລະຫວ່າງປະເທດທາງອາຍາເພື່ອກະກຽມໃຫ້ການສົ່ງບົດລາຍງານສະບັບທີ 2 ດ້ານປະສິດທິຜົນໃນທ້າຍປີ 2020 ແລະ ຈະມີການປະມີນຕົວຈິງໃນຕົ້ນປີ 2021.






ສິ່ງທີ່ກ່າວມາທາງເທິງນີ້, ໄດ້ສ່ອງແສງໃຫ້ເຫັນໝາກຜົນຄວາມຄືບໜ້າທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມແຜນການທີ່ວາງໄວ້. ທັງນີ້ ກໍ່ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ໃນໂອກາດດັ່ງກ່າວ, ທ່ານປະທານ ຄຕຟງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະກຳມະການ 4 ພາກສ່ວນ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນໄດ້ທຸ້ມເທສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນການກະກຽມເນື້ອໃນ ແລະ ສ້າງແຜນວຽກລະອຽດ ເພື່ອຮອງຮັບໃຫ້ແກ່ການກະກຽມປະເມີນ. ສະນັ້ນ, ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານການກະກຽມປະເມີນໃຫ້ສຳເລັດຜົນດ້ວຍດີນັ້ນ ມອບໃຫ້ຄະນະກຳມະການຊີ້ນຳກົມກອງທີ່ຕິດພັນກັບແຕ່ລະບັນຫາທີ່ຂຶ້ນກັບພາລະບົດບາດຂອງແຕ່ລະກະຊວງ-ອົງການ ຢ່າງໃກ້ຊິດ ແລະ ພ້ອມທັງສະລະເວລາເຂົ້າຮ່ວມເຮັດວຽກຕົວຈິງກັບກອງເລຂາດ້ວຍຄວາມຮັບຜິດຊອບສູງ ເພື່ອໃຫ້ມີຄວາມຄືບໜ້າໃນແຕ່ລະດ້ານ ຮອງຮັບໃຫ້ແກ່ການປະເມີນ ສປປ ລາວ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃຫ້ຢູ່ໃນລະດັບທີ່ດີ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**